ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ 9101
ນະຄອນຫຼວງວຽງຈັນ, ວັນທີ: 13 ມິຖຸນາ 2024

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

ເລື່ອງ: ແຈ້ງມະຕິຂອງກອງປະຊຸມວິສາມັນຜູ້ຖືຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຄັ້ງທີ 1 ປະຈຳປີ 2024

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ ລົງວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 008/ຕລຊລ ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ລອຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ບໍລິສັດໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2024 ໃນວັນທີ 13 ມິຖຸນາ 2024 ຕອນບ່າຍ ເວລາ 13:30 ທີ່ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 3, ຕຶກ NNN, ຖະໜົນ ບຸລີຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມ ທັງໝົດ 03 ທ່ານ ຊຶ່ງໄດ້ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ, ໂດຍຖືຮຸ້ນລວມທັງໝົດ 298,362,900 ຮຸ້ນ ຫຼື 98,96% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມມີມະຕິດັ່ງນີ້:

ວາລະທີ 1 ພິຈາລະນາ ແລະ ຮັບຮອງ ການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍປີ ວັນທີ 31 ທັນວາ 2022.

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

• ເຫັນດີ	298,362,900	ສຽງ ຫຼື ເທົ່າກັບ 100%
• ບໍ່ເຫັນດີ	0	ສຽງ ຫຼື ເທົ່າກັບ 0%
• ລວມ	298,362,900	ສຽງ ຫຼື ເທົ່າກັບ 100%

ກອງປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ. ດັ່ງນັ້ນ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມລົງໃນເວລາ 14:30 ໂມງ. ຈຶ່ງຮຽນມາເພື່ອຊາບ.

ດ້ວຍຄວາມນັບຖື,
(ເຊັນແທນ) ປະທານກອງປະຊຸມ

ທ່ານ ນາງ ປາລະມີ ພົມມະສອນ

ສແกนด้วย CamScanner